


ບຸນເກີດ ຄຳພາພົງຜ່ານ

ອະດີດປະທານຄະນະລຸກຮືຂຶ້ນຍຶດ

ກິດຈະການ ໄຟຟ້າລາວ 14 ຕຸລາ ( 10 ) 1974


# ຄົນຂ້ອນແຈ້ງ


ນະຄອນຫລວງວຽງຈັນ 2004

ພິມຄັ້ງທີ I

# ສໍ້ລາດ-ຊາດຕາຍ

★ ບຸນເກີດ ຄຳພາພົງຜ່ານ

ສໍ້ລາດຄືປອກຮ້າຍ ຄືໂຕມອດເຈາະເຮືອນ ນັ້ນແລ້ວ
ບັງຫລວງຄືເງົາຜີ ຄອບຄອງໃຫ້ຄືນເຊື້
ສອງກຳລັງຜີຮ້າຍ ມັນໝາຍປອງປົ້ນຊາດ ລາວເດີ້
ໃຜຖືກສິງສູ່ແລ້ວ ມັນເມົາງ້ວງຊວງບ່ເປັນ ດອກນາ
ປອກ,ມອດ ເຂົ້າສູ່ບ້ານ ມັນກັດກອດກິນແກນ ໂວດໃດ໋ !
ເສົາ,ຂື່,ຂາງ ລະແທງເຮືອນ ດ້ານໃດບ່ມີເວັ້ນ
ກິນແລ້ວສະສົມເຊື້ອ ວົງຕະກຸນໃຫ້ເຕີບໃຫຍ່
ຂະຫຍາຍພັນບົ່ມເຊື້ອ ສ້າງແນວເພີ້ມຕື່ມທະວີ
ທຸກມື້ລຸກຄືບໜ້າ ມ້າງມຸ່ນໂຄງຖານ
ເຮັດໃຫ້ເຮືອນຊານຊຸດ ອ່ອນເພັຽແຮງຄ້ຳ
ໂຄງສ້າງເຄຫາຊ້ຳ ຊິເຮືອນເຊເຍ້ເຫຍື່ອນ
ຄອຍແຕ່ມື້ຊິລົ້ມ ລົງພື້ນບ່ຕ່າວຄືນ ນັ້ນແລ້ວ
ຂ້າຂໍວອນຜູ້ໃຊ້ ເຮືອນໃໝ່ຫລັງງາມ ນີ້ນາ
ຢ່າມົວມອງແຕ່ພຽງສີ ຮ່າງເຮືອນແບບເບື້ອນມົ້ວ
ເຫັນແຕ່ສີສັນສົ້ວ ພ່ສຽວຕາແບບປັດປ່າຍ
ບາດໂລກຮ້າຍເຂົ້າມຸ່ນມ້າງ ໃນເຮືອນເຈົ້າຊ້າງບ່ເຫັນ ເຈົ້າເອີຍ
ເອົາລະມື້ໃດເຮືອນເຈົ້າເຊ້ ເຊຖະຫລົ່ມລົງດິນ
ລົ້ມທັບຄົນທັງຫລັງເຮືອນ ບ່ເລືອກຄົນດີຮ້າຍ
ມີສິດຕາຍທັງບ້ານ ເໝືອນກັນຜີບັດຄອນ
ຄົນສໍ້ລາດ,ຄົນຮັກຊາດບ່ເລືອກໜ້າ ຕາຍພ້ອມພ່າກັນ ນັ້ນແລ້ວ
ຜູ້ຂ້າຂໍກາບເທົ້າ ຜູ້ຫລົງເຫີ່ແຕ່ບ່າເງິນ ນັ້ນນາ
ຂໍຈົ່ງເຫັນບຸນຄູນ ເພິ່ນຜູ້ບ່າລາວກ້າ
ເສັຽສະລະສຸດເອື້ອງ ເພື່ອເມືອງລາວ "ເອກະລາດ"
ກອບກູ້ຊາດຝາກໄວ້ ໃຫ້ຄົນລຸ້ນຮຸ່ນພວກເຮົາ ນັ້ນແລ້ວ
ຂໍບ່າທ້ອນ !ຂໍໃຫ້ເຈົ້າຜູ້ເກີດຫລ້າ ຢ່າກ້າຖ່ອຍທໍ່ລະຍົດ ພວກລຸງເນີ້ !
ຈົ່ງເກີດທູນບູຊາ ຊ່ວຍຮັກສາມູນເຊື້ອ
ຢ່າໄດ້ຫລົງໄຫລເຊື້ ລະເມີບ່າແຕ່ສໍ້ລາດ
ມັນຄື ອາຫານໃສ້ງອນ ກິນແລ້ວ ມອດຊີວິດ ນັ້ນແລ້ວ ( ຕາຍ ! )


ก.3

# * 8 ປະກາຍແສງ ສຸພານຸວົງ *

*ຂໍມອບຄຳກອນຈາກຫົວໃຈອັນບໍລິສຸດ ອຸທິດໃຫ້ເພິ່ນ ເນື່ອງໃນໂອກາດ ວັນເກີດປະທານ ສຸພານຸວົງ ທີ່ເຄົາລົບ ຄົບຮອບ 95 ປີ (1909 - 2004) ໂດຍ: ບຸນເກີດ ຄຳພາພົງຜ່ານ*



1 ສຸພານຸວົງ ປຸນປຸງບ ຄືໜ່ວຍແກ້ວ    ແວວສ່ອງ ຈະຫລັດແສງ
ຄືພືນ ທຸງປີວ ສະບັດ    ຮຽກລະດົມ ປຸກ ເອີ້ນ
ເຊີນຊວນ ລາວ ຊຸມເຊື້ອ    ຜູ້ຫລັບໄຫລ ໃຫ້ຟ້າວຕື່ນ    ມາເດີ.
ລຸກຂຶ້ນ ກູ້ຊາດໄວ້    ຢ່າຍອມໃຫ້ ຜູ້ອື່ນຄອງ ໄດ້ນາ.

2 ເຖິງເພິ່ນ ເປັນ ເຊື້ອເຈົ້າ    ເກີດມານັ່ງສະເຫວີຍສຸກ ກໍ່ດາຍແລ້ວ
ໃຈເພິ່ນ ຍັງອາໄລຫາ    ໄພ່ປະຊາຜູ້ແສນຮ້ອນ
ຍ້ອນເມືອງລາວ ຖືກເຂົ້າປຸ້ນ    ໄດ້ສູນເສັຽ ເອກະລາດ    ໄປແລ້ວ !
ເຂົາຢ່ຳ ຍີ ຢຽບຍັ້ນ    ໃຫ້ລາວນັ້ນ ຄູ້ເຂົ່າຍອມ    ເພິ່ນແລ້ວ !

3 ເພິ່ນເປັນປັນຍາຊົນ ຜູ້ຢັ່ງຮູ້    ປັນຍາສ່ອງ ຮຽນບໍ່ຢຸດ
ເປັນຄົນລາວ ຄົນທຳອິດ    ທີ່ເກັ່ງຮຽນເສັງໄດ້
ເປັນວິສະວະກອນ ຂົວ-ທາງ ລຸ້ນ    ຍາມລາວ ສູນເສັຽປະເທດ
ເປັນເມືອງຂຶ້ນ ເມືອງອານັກຂາ ເຂົາ ກຽດ ມອດມ້ອຍ    ບໍ່ມອງໜ້າ ໄພ່ປະຊາ    ໄດ້ນາ.

4 ລູງເປັນແບບຢ່າງ ແຫ່ງ ຜູ້ເກັ່ງກ້າ    ບໍ່ຢ້ານຢ່ອນ ແມ້ຄວາມຕາຍ
ຄວາມທຸກເຂັນທໍລະມານ    ບໍ່ສິ້ນຄອນ ລູງໄດ້
ຖືກສັດຕູຍິງ ທຳລາຍ ຫວັງຂ້າ    ຄາເຮືອແພ ເກືອບສູນຊີບ
ຖືກເຂົາຈັບຂັງຄຸກ ບີບໃຫ້ລູ້ເຂົ່າກົ້ມ    ເຊັ່ນຍອມແພ້ເພິ່ນບໍ່ທຳ    ດອກນາ

5 ເພິ່ນຄື ຜູ້ຫຽງຕັ້ງ    ຍຶດໝັ້ນ ອຸດົມການ
ຖືຄຸນນະທຳ ເປັນຊີວິດ    ບໍ່ ຫຼົງ ຄອນ ແຄນ ເຄືອນ
ມີສະຕິ ໃນການຈັດຕັ້ງ    ວິໄນສູງ ເປັນແບບຢ່າງ
ທາກ ຄະນະ ມອບຍັ້ນໃຫ້    ແນວໃດແລ້ວ ກໍ່ໄປຕາມ

6 ແບບແຜນເພິ່ນ ເດັ່ນພົ້ນ    ບໍ່ງໍ້ງໍ ຕໍ່ຄວາມທຸກ
ຢູ່ຢ່າງ ສາມັນຊົນ    ໝັ້ນ ອອມ ອົດ ກັ້ນ
ດຸໝັ່ນ ພຽນເພັງສ້າງ    ຖະໜອມຕົນ ເປັນແບບຢ່າງ
ຮຽນຮ່ຳ ຫລອນ ຫລີ່ ເລື້ອຍ    ບໍ່ມີຜູ້ ໝູ່ວິຊາ    ດອກນາ

7 ແຊວແຊວ ຄົນກ່າວເວົ້າ    ວ່າລູງໃຫຍ່ ສຸພານຸວົງ
ລືລັ່ນ ດັ່ງສະເນືອນຟ້າ    ວ່າເກັ່ງ ເກມ ກົດໝາຍຮູ້
ທາງການເມືອງ ເພິ່ນລົງສູ້    ກໍ່ຊີງໄຊ ໄດ້ທຸກເທື່ອ
ໃຜກໍ່ຍົກໂປ້ໃຫ້    ປະຊາເຊື້ອ ໄດ້ເຊື່ອໃຈ    ເພິ່ນແລ້ວ.

8 ຊື່ສຽງ ຮຽງນາມ ເພິ່ນສະນັ່ນກ້ອງ    ພື້ນຂອບ ນະພາ ລາວ
ນັກຕໍ່ສູ້ ກູ້ຊາດໃນສາກົນ    ກໍ່ກ່າວຍອມ ຍໍຍ້ອງ
ບາງຄົນ ຂະໜານນາມ ເອີ້ນ    "*ເຈົ້າຊາຍແດງ*" ຜູ້ອົງອາດ    ກໍ່ສົມແລ້ວ
ຂອງຊາດລາວ ຜູ້ເອກອ້າງ    ກໍ່ມີແທ້ ແຕ່ຜູ້ດຽວນີ້ແລ້ວ.

*ພາລະກິດ ແລະ ຜົນງານ ທ່ານປະທານ ສຸພານຸວົງ ໝັ້ນຍືນ !*

# ຊີວະປະຫວັດຫຍໍ້ ຂອງ
# ທ່ານ ບຸນເກີດ ຄຳພາພິງຜ່ານ

- ເກີດວັນທີ່: 15 / 02 / 1946, ທີ່ບ້ານ ດອນແຊ, ເມືອງ ຊະນະ ສົມບູນ, ແຂວງຈຳປາສັກ, ສັນຊາດ: ລາວ, ເຊື້ອຊາດ: ລາວ, ຊົນເຜົ່າ: ລາວລຸ່ມ, ສາດສະໜາ ພຸດ.
- ເປັນບຸດຂອງ: ພໍ່ຈານ ປູ້ຍ ຄຳພາພິງຜ່ານ (ຕາຍ) ແລະ ນາງ ຈັນລາ ຄຳພາພິງຜ່ານ, ອາຊີບ: ພໍ່ນາກຸ້ມກິນ. ມີອ້າຍເອື້ອຍນ້ອງຄີງຮ່ວມ ກັນ 4 ຄົນ (ຊາຍ 2 ຄົນ, ຍິງ 2 ຄົນ ) ແຕ່ງງານກັບນາງ ຈັນສີ ພົມສຸວັນ ມີລູກນຳກັນ 4 ຄົນ ( ຊາຍ 3 ຄົນ, ຍິງ 1 ຄົນ ).

✪ *ການສຶກສາ :*

*1952-1957:* ຈົບໂຮງຮຽນປະຖົມ 3 ທີ່ໂຮງຮຽນບ້ານໜອງຂາມ, ເມືອງ ຊະນະສົມບູນ, ແຂວງຈຳປາສັກ ແລະ ໂຮງຮຽນປະຖົມ ສົມບູນບ້ານແກ້ງຫວດ, ເມືອງຄົງເຊໂດນ, ແຂວງ ສາລະວັນ.

*1958-1964:* ຈົບໂຮງຮຽນມັດທະຍົມສົມບູນທີ່ໂຮງຮຽນມັດທະຍົມ ເມືອງປາກເຊ, ແຂວງຈຳປາສັກ.

*1965-1969:* ຈົບວິຊາໄຟຟ້ານຳ້ຕົກທີ່ໂຮງຮຽນການຊ່າງ ໂສກປ່າຫລວງ ວຽງຈັນ,ໄປຮຽນຕໍ່ວິຊາຊີບຂອງການ ໄຟຟ້າຝລັ່ງເສດ ຂະແໜງວິຊາໄຟຟ້ານຳ້ຕົກແລະ ວິຊາຄຸຣຸສາດທີ່ປະເທດ ຝລັ່ງເສດ(ໂຮງຮຽນດ້ານວິຊາຊີບແຫ່ງຊາດຂອງການ ໄຟຟ້າຝລັ່ງເສດ) Ecole Nationale des Metiers EDF.

1970-80

*1980-1983:* ຮຽນໂຮງຮຽນທິດສະດີການເມືອງຊັ້ນສູງຂອງພັກ ປປລ ທີ່ທ່າງອນ ວຽງຈັນ.

*1985-1988:* ຮຽນໂຮງຮຽນທິດສະດີພິເສດ ທຽບອາຍກວັກ ດາກວຽດ ທີ່ຮາໂນ່ຍ ສ.ສ ຫວຽດນາມ. (ຂະແໜງ ລັດຖະສາດ, ເສດຖະສາດ ).

*1988-1990:* ຮຽນຕໍ່ວິຊາພາສາສາດ ຂະແໜງພາສາຝລັ່ງເສດ ທີ່ມະຫາວິທະຍາໄລດົງໂດກວຽງຈັນ, (ຊັ້ນສູງ ປະລິນຍາຕີ).

✪ *ຕຳແໜ່ງງານທາງວິຊາຊີບ:*

*1964-1965:* ເປັນຜູ້ຊ່ວຍງານເລຂາ ອົງການອາໂດ້ (ຂະແໜງ ເກັບຊື້ເຂົ້າເປືອກ). ເປັນຫົວໜ້າຂະແໜງຮັກສາ ຄວາມປອດໄພ ບ/ສ ລາວເດີນອາກາດ. ເປັນນັກໜັງສືພິມ, ປະຈຳກອງບັນນາທິການໜັງສືພິມ ສຽງມະຫາຊົນ.

*1970-1974:* ເປັນອາຈານສອນວິຊາໄຟຟ້ານ້ຳຕົກ ແລະເຕັກໂນໂລຊີອຸປະກອນໄຟຟ້າ ທີ່ບໍລິສັດໄຟຟ້າລາວ (ໂສກປ່າຫລວງວຽງຈັນ).

*1974-1975:* ເປັນຜູ້ວ່າການ ເອກອະທິບໍດີໄຟຟ້າລາວ, ເປັນຮອງຫົວໜ້າກົມກົນຈັກ ແລະ ພະລັງໄຟຟ້າ.

*1976-1979:* ເປັນຫົວໜ້າຄະນະຄຸ້ມຄອງການກໍ່ສ້າງເຂື່ອນນ້ຳງື່ມ 1 ໄລຍະ 2 ທີ່ແຂວງວຽງຈັນ.

*1993-2000:* ເປັນຫົວໜ້າໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳຕົກຫ້ວຍເຫາະ.

*2000-2004:* ເປັນກຳມະການໃນສະພາບໍລິຫານ ບໍລິສັດໄຟຟ້າຫ້ວຍເຫາະຈຳກັດ, ເປັນຜູ້ຕາງໜ້າລັດຖະບານລາວປະຈຳໂຄງການ.

✪ *ຕຳແໜ່ງທາງການເມືອງ:*

*1957-1964:* ເປັນສະມາຊິກສະມາຄົມສະກຸດແຫ່ງຊາດລາວ: ໄດ້ຮັບຕຳແໜ່ງຕັ້ງແຕ່ຫົວໜ້າໝວດ, ເປັນສາລະວັດສະກຸດປະຈຳເມືອງປາກເຊ ແລະສາລະວັດສະກຸດແຂວງຈຳປາສັກ.

*1972-1975:* ເປັນກຳມະການສູນກາງສະຫະພັນແຮງງານລາວ.

- ເປັນປະທານສະຫະພັນແຮງງານລາວ ສາຂາ ໄຟຟ້າລາວ.
- ເປັນຄະນະກຳມະການ 21 ອົງການ ເພື່ອສະໜັບສະໜູນການເຊັນ ແລະປະຕິບັດສັນຍາສັນຕິພາບ, ສ້າງຄວາມຖືກຕ້ອງປອງດອງຊາດ ໃນລາວ.
- ເປັນຫົວໜ້າຄະນະກະກຽມຂົນຂວາຍຍຶດອຳນາດການປົກຄອງ ໂດຍສັນຕິມາມີປະຊາຊົນທົ່ວປະເທດ ຫລື ຊື່ລັບວ່າ "ຄະນະ 08" ຂອງໄຟຟ້າລາວ ໃນບັ້ນລົບ 3 ບາດຄ້ອນຍຸດທະສາດ ຂອງພັກ ປ.ປ.ລ.
- ເປັນຫົວໜ້າຄະນະລຸກຮື້ຂຶ້ນຍຶດອຳນາດໄຟຟ້າລາວຂັ້ນສູນກາງ ແລະ ທົ່ວປະເທດຄັ້ງວັນທີ່ 14/10/74.
- ເປັນສະມາຊິກກຳມະບານລາວຮັກຊາດ.
- ເປັນສະມາຊິກຊາວໜຸ່ມລາວຮັກຊາດ.

*1974-1980:* ເປັນຜູ້ສ້າງຕັ້ງ ແລະ ເປັນຜູ້ບັນຊາການກຳລັງປະກອບອາວຸດປ້ອງກັນຕົນເອງຜູ້ອອກແຮງງານ ໄຟຟ້າລາວ.

- ເປັນສະມາຊິກສະພາປະຊາຊົນ ນະຄອນຫລວງວຽງຈັນ.

*28 ພະຈິກ -2 ທັນວາ.ປີ 1975:* ເປັນຜູ້ຕາງໜ້າຊາວຜູ້ອອກແຮງງານທົ່ວປະເທດ ເຂົ້າຮ່ວມກອງປະຊຸມໃຫຍ່ຜູ້ແທນປະຊາຊົນທົ່ວປະເທດ ເພື່ອປະກາດໂຄ່ນລົ້ມ ລະບອບສັກດີນາ, ລະບອບກວາງລ່າມ, ລັດທິລ່າເມືອງຂຶ້ນແບບເກົ່າ, ລ່າເມືອງຂຶ້ນແບບໃໝ່, ປະກາດສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

*1975-1998:* ເປັນສະມາຊິກສະພາປະຊາຊົນສູງສຸດ ຊຸດທີ່ (1) ຈາກເຂດເລືອກຕັ້ງທີ່ 1, ນະຄອນຫລວງວຽງຈັນ, ໃນເວລາດຳລົງຕຳແໜ່ງນີ້ໄດ້ຮັບມອບໝາຍຈາກ ຄະນະປະຈຳສະພາປະຊາຊົນສູງສຸດ ຄືດັ່ງນີ້:

1. ເປັນຫົວໜ້າອະນຸກຳມາທິການລຽບລຽງ, ຮ່າງ ແລະ ທາບທາມປະຊາຊົນຕໍ່ກົດໝາຍ: ແພ່ງ, ອາຍາ, ດຳເນີນຄະດີແພ່ງ, ຄະດີອາຍາ, ສັນຊາດ, ຄອບຄົວ, ຂໍ້ຜູກພັນໃນ ແລະ ນອກສັນຍາ.

2. ເປັນຫົວໜ້າກຳມາທິການຮ່າງກົດໝາຍວ່າດ້ວຍການຈັດຕັ້ງອົງການອຳນາດລັດ (ລັດຖະບານ, ສະພາປະຊາຊົນ, ສານ, ໄອຍະການ...) ນອກນັ້ນຍັງມີ ກົດໝາຍລົງທຶນຕ່າງປະເທດ, ກົດໝາຍເລືອກຕັ້ງສະພາທ້ອງຖິ່ນ, ແລະ ໄດ້ປະກອບສ່ວນລຽບລຽງຮ່າງກົດໝາຍສຳຄັນປະໄວ້ 18 ສະບັບ.
3. ເປັນຫົວໜ້າອະນຸກຳມາທິການລຽບລຽງ ແລະ ຮ່າງກົດໝາຍລັດຖະທຳມະນູນ ສະບັບປະຖົມມະລຶກຂອງຊາດ.

_1975- 1977:_ ເປັນຄະນະກຳມະການຂົນຂວາຍສ້າງຕັ້ງສະຫະພັນກຳມະບານລາວ ຊຸດປະຖົມມະລຶກ, ປ່ຽນຈາກກຳມະບານລາວຮັກຊາດ.

- ເປັນກຳມະການຮ່າງ ແລະ ລຽບລຽງກົດລະບຽບໃໝ່ທີ່ຈະປ່ຽນແປງອົງການແນວລາວຮັກຊາດມາເປັນແນວລາວສ້າງຊາດ.

_1980-1990:_ ເປັນເລຂາ ແລະ ກຳມະການໃນຄະນະພົວພັນ ແລະ ຮ່ວມມືທາງເສດຖະກິດກັບປະເທດສັງຄົມນິຍົມອ້າຍນ້ອງ.

- ເປັນກຳມະການ ແລະ ເລຂາທິການ ສະມາຄົມມິດຕະພາບ ລາວ-ຍີ່ປຸ່ນ, ລາວ-ເຊັກໂກສະໂລວັກກີ.

_1980-1993:_ ເປັນຮອງລັດຖະມົນຕີກະຊວງອຸດສາຫະກຳ, ການຄ້າ ແລະ ປ່າໄມ້, ຮອງລັດຖະມົນຕີກະຊວງອຸດສາຫະກຳ-ການຄ້າ ແລະ ຮອງລັດຖະມົນຕີ ກະຊວງອຸດສາຫະກຳ-ຫັດຖະກຳ.

_1990-1993:_ ຖືກເລືອກຕັ້ງເປັນສະມາຊິກສະພາປະຊາຊົນສູງສຸດຈາກເຂດເລືອກຕັ້ງທີ່ 15 ແຂວງຈຳປາສັກ, ເປັນກຳມະການໃນຄະນະຮັບຜິດຊອບສະພາຮ່າງລັດຖະທຳມະນູນ ສະບັບປະຖົມມະລຶກຂອງຊາດລາວ ໂດຍຄະນະປະຈຳໄດ້ມອບໝາຍໃຫ້ຮັບເປັນຫົວໜ້າອະນຸກຳມາທິການລຽບລຽງ ແລະ ທາບທາມທາງສຽງປະຊາຊົນຕໍ່ເນື້ອໃນລັດຖະທຳມະນູນ.

_1979-2004:_ ເປັນສະມາຊິກສົມບູນຂອງພັກປະຊາຊົນປະຕິວັດລາວ.

_ມິຖຸນາ, ປີ 2004:_ ເປັນຄະນະປະທານທີ່ປຶກສາສະມາຄົມຜະລິດຕະພັນ

ປອດສານພິດ ແລະ ການຜະລິດແບບຍືນຍົງແຫ່ງຊາດ.

*14 ຕຸລາ (10) 2003:* ຖືກເລືອກຕັ້ງເປັນຄະນະຂົບຂວາຍສ້າງຕັ້ງກອງທຶນ " ນ້ຳໃຈ 14 ຕຸລາ 1974 "

✪ ***ການຍ້ອງຍໍກຽດຕິຄຸນ:*** ຜ່ານມາໄດ້ຮັບການຍ້ອງຍໍ ຄືດັ່ງລຸ່ມນີ້:

1. ຫລຽນໄຊອິດສະຫລະ: ຊັ້ນ 3.......................... 2 ດວງ.
2. ຫລຽນໄຊແຮງງານ : ຊັ້ນ 1.......................... 1 ດວງ.
3. ຫລຽນໄຊແຮງງານ : ຊັ້ນ 2.......................... 1 ດວງ.
4. ຫລຽນໄຊແຮງງານ : ຊັ້ນ 3.......................... 3 ດວງ.
5. ຫລຽນກາ 5 ປີ : ............................................ 1 ດວງ.
6. ໃບຍ້ອງຍໍຂັ້ນລັດຖະບານ :................................ 8 ໃບ.
7. ໃບຍ້ອງຍໍຂັ້ນກະຊວງ :..................................... 3 ໃບ.
8. ໃບຍ້ອງຍໍຂັ້ນເມືອງ :........................................ 1 ໃບ.
9. ໃບຈາລຶກບຸນຄຸນ :............................................ 7 ໃບ.
10. ໄດ້ຮັບລາງວັນກະແຈຄຳ ໜັກ 5 ບາດຄຳ ຈາກສຳນັກງານໃຫຍ່ ບ/ສ ແດວູ ເກົາຫລີໃຕ້ ແລະ ໃບສະດຸດີຜົນງານລະດັບກຽດຕິຄຸນ ໃນການ ກໍ່ສ້າງເຂື່ອນໄຟຟ້ານ້ຳຕົກຫ້ວຍເຫາະ ....... 1 ຊຸດ.

24 / VII

ຫ້າມຈຳໜ່າຍ



**ຄະນະຈັດທຳ:**

- ບຸນເພັງ ສຸພາບ
- ພູວົ ພຣະໄຊສິດທິເດດ
- ບຸນໄຊ ວົງຈັນດີ
- ບຸນມີ ຄຸ່ງມມະນີວົງ
- ວັນຄຳ ລໍວັນໄຊ

**ຄອມພິວເຕີ:**

- ນ. ສົມັວອນ ວາດຕະນາ
- ວົງນະຄອນ ໄຊຍະລາດ
- ນ. ບານຈິດ ຄຳພາພົງຜ່ານ
- ທ. ສົມບູນ

**ຄະນະຄວບຄຸມການພິມ:**

- ທ. ພູວົ ພຣະໄຊສິດທິເດດ
- ນ. ແວວມະນີ ອາໄພຍະລາດ

ຕາມ ທ.ບ 39 / ພ.ຈ / 19.02.2004
ພິມທີ່: ໂຮງພິມ ສີສະຫວາດການພິມ
ຈຳນວນພິມ: 5.000 ຫົວ
ຂະໜາດ: 13 x 19 ຊມ

ຈັດພິມເພື່ອຂໍ່ານັບຮັບຕ້ອນ ວັນຄົບຮອບ 30 ປີ ແຫ່ງການ
ລຸກຮື້ຂຶ້ນຍຶດອຳນາດຂອງຊາວຜູ້ອອກແຮງງານ ໄຟຟ້າລາວ

(14.10.1974 - 14.10.2004)

# - ຄຳປາລົບຂອງຜູ້ຂຽນ -



* ເນື້ອໃນທັງໝົດທີ່ຖືກ ຈັດລົງພິມໃນປື້ມຫົວນີ້ ແມ່ນລ້ວນແຕ່ໄດ້ມາຈາກການຄັດຈ້ອນ, ເລືອກເຟັ້ນ *ເອົາພຽງເຫດການທີ່ເດັ່ນ, ເປັນຈິງ ແລະ ສິ່ງຜົນກະທົບຕໍ່ຜົນປະໂຫຍດ ທາງວັດຖຸ ແລະ ຈິດໃຈຕໍ່ຊາວໄຟຟ້າລາວ, ສ່ວນໃຫຍ່ເທົ່ານັ້ນ.*

*** ການຮວບຮວມ, ຈົດກ່າຍ ແລະ ບັນທຶກເຫດການເດັ່ນເກີດຂຶ້ນໃນຊຸມປີ 1972 - 1975 ໃນຂອບເຂດກິດຈະການຂອງໄຟຟ້າລາວ,** ***ໂດຍສະເພາະຕົ້ນເຫດທີ່ພາໃຫ້ເກີດການລຸກຮື້ຂຶ້ນປະທ້ວງແລ້ວຢຶດເອົາກິດຈະການໄຟຟ້າລາວ, ໂດຍຊາວຜູ້ອອກແຮງງານໄຟຟ້າລາວໃນວັນທີ 14 / 10 / 1974 ນັ້ນ, ເປັນເຫດການປະຫວັດສາດສຳຄັນເຫດການໜຶ່ງ ຂອງການຕໍ່ສູ້ຂອງຊົນຊັ້ນກຳມະກອນຜູ້ໝຸ່ມນ້ອຍຂອງລາວເຮົາ ເພື່ອຕ້ານການກົດຂີ່ຂູດຮີດຂອງຊົນຊັ້ນປົກຄອງ ແລະ ຜູ້ບໍລິຫານໃນໄຟຟ້າລາວ, ເພື່ອແນໃສ່ປົກປ້ອງຜົນປະໂຫຍດອັນຊອບທຳຂອງຕົນ ແລະ ພິທັກຮັກສາຄວາມເປັນທຳ ກໍ່ຄືສິດທິພື້ນຖານຂອງ ພົນລະເມືອງ ອັນຕ່ຳສຸດຂອງພວກຕົນໄວ້.***

* ຍ້ອນໄຟຟ້າລາວ, ເປັນກິດຈະການທີ່ຕິດພັນກັບຄວາມຈະເລີນເຕີບໂຕຂອງເສດຖະກິດແຫ່ງຊາດ, ຕິດພັນກັບຊີວິດຄວາມເປັນຢູ່ຂອງຄົນທັງປະເທດ ແລະ ປະເທດເຮົາກໍ່ເປັນປະເທດທີ່ມີທ່າແຮງທາງ ດ້ານໄຟຟ້ານ້ຳຕົກທີ່ອຸດົມສົມບູນ ໃນຂົງເຂດນີ້ຂອງໂລກຢູ່ແລ້ວ. ມັນ *ເປັນຈຸດສຸມແຫ່ງຄວາມສົນໃຈ* ບໍ່ພຽງແຕ່*ອຳນາດການ*

*ປົກຄອງເກົ່າເທົ່ານັ້ນ,* ຍັງເປັນກິດຈະການທີ່ພວກນາຍທຶນຕ່າງຊາດຈ້ອງມອງ ແລະ ຊອກທຸກເງື່ອນໄຂ *ເພື່ອເຂົ້າມາມີສ່ວນແບ່ງເອົາຜົນປະໂຫຍດ*ຈາກທ່າແຮງດັ່ງກ່າວນີ້ດ້ວຍ.

* *ການລຸກຮື້ຂຶ້ນກອບກູ້ເອົາກິດຈະການໄຟຟ້າລາວ* ມາເປັນຂອງຊາວຜູ້ອອກແຮງງານໄຟຟ້າລາວ ກໍ່ຄືຂອງຄົນລາວຜູ້ຮັກຊາດ ແລະ *ປະກາດຕົນບໍ່ຂຶ້ນຕໍ່ຝ່າຍວຽງຈັນ ດັ່ງນີ້ເປັນຂີດໝາຍຈຸດເລີ່ມສຳຄັນຂອງການເປີດສາກປະຕິບັດ " ຍຸດທະສາດ 1/3 ບາດຄ້ອນປະຕິວັດ " ເພື່ອຢຶດອຳນາດການປົກຄອງມາມືປະຊາຊົນ ໂດຍບໍ່ເສັຍເລືອດເນື້ອ,* ການປະຕິວັດລາວ ໄດ້ດັງກ້ອງສະນັ່ນໄປທົ່ວປະເທດ. *ຍ້ອນວ່າ 1/3 ຂອງຍຸດທະສາດ* 3 ບາດຄ້ອນປະຕິວັດນັ້ນແມ່ນ " *ການລຸກຮື້ຂຶ້ນຂອງປວງຊົນໃນເຂດຄອບຄອງ ຂອງຝ່າຍກົງກັນຂ້າມຕໍ່ການປະຕິວັດກໍ່ຄື ເຂດນະຄອນຫລວງເປັນກາງ ແລະ ເຂດຄອບຄອງຂອງສັດຕູ* "ຕາມເງື່ອນໄຂຂອງສັນຍາ ແລະ ອະນຸສັນຍາວຽງຈັນ ປີ 1973 ວ່າດ້ວຍການຟື້ນຟູສັນຕິພາບ ແລະການສ້າງຄວາມຖືກຕ້ອງປອງດອງຊາດຢູ່ໃນລາວ. ທີ່ຝ່າຍກຳລັງຮັກຊາດ ແລະ ຝ່າຍວຽງຈັນ ໄດ້ເຊັນກັນ.

* ຜົນພວງຈາກໄຊຊະນະ ຂອງກຳມະກອນໄຟຟ້າລາວ. ໄດ້ *ລຸກຮື້ຂຶ້ນເປັນຜູ້ທຳອິດ ແລະເຂົ້າຢຶດເອົາກິດຈະການໄຟຟ້າລາວ. ມາບໍລິຫານຈັດການ, ຄຸ້ມຄອງ, ບັນຊາດ້ວຍຕົນເອງ ແລະ ທຳການຂັບໄລ່ຊົນຊັ້ນປົກຄອງໄຟຟ້າລາວ ອອກຈາກທຸກຕຳແໜ່ງສຳຄັນໄດ້ຢ່າງເດັດຂາດໃນວັນທີ 14 /10/ 1974 ນັ້ນ, ມັນໄດ້ສົ່ງສັນຍານໄຟຂຽວແຈ້ງບອກທຸກ*ກຳລັງຮັກຊາດ, ຮັກຫອມສັນຕິພາບ, ຮັກ

ຄວາມເປັນທຳກໍ່ຄືຊົນຊັ້ນກຳມະກອນ, ຊາວຜູ້ອອກແຮງງານທີ່ຖືກກົດຂີ່ຂົ່ມເຫງແລະ ບັ່ນທອນສິດທິເສລີພາບ ສາມາດສະຫລູບຖອດຖອນບົດຮຽນຕີລາຄາສະພາບການ ແລະ *ການຊັ່ງຊາກຳລັງລະຫວ່າງ ຝ່າຍປະຕິວັດ* ແລະ *ຝ່າຍປໍລະປັກ,* ລະຫວ່າງຝ່າຍຮັກຫອມຄວາມເປັນທຳ ແລະຝ່າຍອະທຳນັ້ນ "ຕາຊັ່ງເປັນແນວໃດ?" ການລົ້ມລົງຂອງອຳນາດການປົກຄອງໄຟຟ້າລາວ ທີ່ຝ່າຍວຽງຈັນໄດ້ກໍ່ຕັ້ງ ແລະທະນຸຖະໜອມມາແຕ່ດົນນານແລ້ວນັ້ນ *ກາຍເປັນເສົາເສຊີ້ແນະບອກຫລຸມຝັງສົບຫລຸມທຳອິດ ຂອງກົນໄກເສດຖະກິດຈຸນລະພາກໃນເຂດຄອບຄອງຂອງສັດຕ* ກ່ອນບັນດາພື້ນຖານທຸລະກິດຕ່າງໆ ຈະຖືກ*ປ່ຽນແທນ ໂດຍກຳມະສິດອື່ນ.* ໄຊຊະນະຢ່າງເດັດຂາດຂອງ ກຳມະກອນໄຟຟ້າລາວຄັ້ງນີ້ມັນ *ອັດສີດຄວາມເຂັ້ມແຫ່ງກະແສຟອງທາງດ້ານແນວຄິດຂອງຊັ້ນຄົນຕ່າງໆ* ໃນທົ່ວສັງຄົມລາວຖືກກະຕຸ້ນດ້ວຍແສງສະຫວ່າງຂອງການປະຕິວັດ, *ເຫັນໄດ້ແຈ້ງຕື່ມສັດຈະທຳຂອງຍຸກສະໃໝມາຮອດແລ້ວ,* ຈາກນັ້ນຈຶ່ງໄດ້ມີການຕື່ນຕົວຈັດຕັ້ງ, ນຳພາກັນລຸກຂຶ້ນປະທ້ວງຝ່າຍວຽງຈັນຢ່າງເປັນຂະບວນ, ຕໍ່ເນື່ອງເຂັ້ມຂຸ້ນຕັ້ງແຕ່ໃນແຕ່ລະສຳນັກງານ, ອົງການ, ແຜ່ລາມໄປທົ່ວປະເທດ ແລະ ກ້າວຂຶ້ນອອກເດີນຂະບວນເປັນໝື່ນ ເປັນແສນຢູ່ກາງຖະນົນກໍ່ຄືໃນທີ່ຊຸມຊົນຕ່າງໆ ກ້າວໄປ*ເຖິງປະກາດຍຶດ ເອົາອຳນາດ ການປົກຄອງມາມືປະຊາຊົນທົ່ວນະຄອນວຽງຈັນໃນວັນທີ 23 ສິງຫາ 1975 ກາຍເປັນບາດຄ້ອນສຳຄັນສັກສິດ* ປະກອບສ່ວນເຂົ້າໃນໄຊຊະນະ ມ້ວນທ້າຍ ຂອງການປະຕິວັດຊາດ ປະຊາທິປະໄຕ, ໂຄ່ນລົ້ມອຳນາດການປົກຄອງເກົ່າທີ່ເໜົ່າເໝັນ, ສະຖາປະນາ

ສ.ປ. ປ. ລາວ ຂຶ້ນຢ່າງສະຫງ່າອົງອາດໃນວັນທີ 2 ທັນວາ 1975 ຈົນເທົ່າເຖິງທຸກວັນນີ້.

* ການຂຽນຄືນ ເພື່ອຮວບຮວມເຫດການປະຫວັດສາດການຕໍ່ສູ້ຂອງກຳມະກອນໄຟຟ້າລາວລຸກຂຶ້ນນີ້, ກໍ່ເພື່ອແນໃສ່ *ບັນທຶກ, ປົກປັກຮັກສາ, ຈົດຈຳຜົນງານ ແລະການກະທຳອັນອົງອາດກ້າຫານຂອງເຂົາເຈົ້າໄວ້ ເພື່ອໃຫ້ຄົນລຸ້ນຫລັງໄດ້ຊາບ ແລະເຂົ້າໃຈທັງຮູ້ເລືອກ ເຟັ້ນເອົາສ່ວນທີ່ເປັນຄຸນປະໂຫຍດຂອງການລຸກຂຶ້ນ ເພື່ອແນໃສ່ສຶກສາອົບຮົມ, ເພື່ອປຸກລະດົມຜູ້ສືບທອດພາລະກິດໄຟຟ້າລາວ,* ໄດ້ເສີມຂະຫຍາຍ *ມູນເຊື້ອສ່ວນທີ່ມັນດີງາມນັ້ນ* ເປັນສ່ວນປະກອບຍູ້ *ແຮງການສ້າງສາພັດທະນາກິດຈະການໄຟຟ້າລາວ* ໃຫ້ຈະເລີນກ້າວໜ້າ, ຮຸ່ງເຮືອງ, ຮັ່ງມີເຂັ້ມແຂງຂຶ້ນຢ່າງບໍ່ຢຸດຢັ້ງສົມກັບເຈຕະນາແລະ *ຄວາມມຸ່ງຫວັງຂອງນໍ້າໃຈ ຂອງຊາວຜູ້ລຸກຮື້ຂຶ້ນໃນຍຸກ 14 ຕຸລາ 1974. ໄດ້ອຸທິດ ແລະ ເສັຍສະລະເປັນມູນເຊື້ອຖ່າຍທອດເອົາໄວ້.*

* ແນ່ນອນວ່າ, ບໍ່ມີສັບພະສິ່ງ, ວັດຖຸໃດໃນໂລກນີ້ຈະຍືນຍົງຄົງຕົວໄດ້ຢ່າງຕະຫລອດການ, ທຸກສັບພະສິ່ງລ້ວນແຕ່ປ່ຽນແປງໄປຕາມກາລະເທສະຄືແນວໃດ, ເຫດການທີ່ເກີດຂຶ້ນ ໃນໄຟຟ້າລາວຜ່ານມາກໍ່ເຊັ່ນດຽວກັນ, *ຍ່ອມຈະຖືກລະລືມ ເມື່ອຄົນລຸ້ນພວກເຮົາໄດ້ລາຈາກໂລກນີ້ໄປແລ້ວ* ນານເທົ່າໃດຜູ້ທີ່ເກີດໃໝ່ໃຫຍ່ລຸນມາທົດແທນຄົນລຸ້ນເຮົາ ຍ່ອມບໍ່ອາດຮັບຮູ້ຜົນງານການກະທຳ ຂອງຄົນລຸ້ນກ່ອນ, *ຖ້າພວກເຮົາຫາກບໍ່ບັນທຶກຈົດກ່າຍ, ແລະ ພິມເປັນປຶ້ມ, ລົງພາບສະສົມເກັບມ້ຽນເປັນສຳເນົາເອົາໄວ້ຢ່າງຮັດກຸມ* ແລະ ພາຍໃຕ້

ເງື່ອນໄຂອັນປອດໄພ ຈຶ່ງຈະສາມາດປົກປັກຮັກສາ *ມູນມັງທາງວັນນະກຳ*ຂອງເຮົາໄວ້ໄດ້.

ຄຳຮຽກຮ້ອງຂອງບັນດານັກຮົບໄຟຟ້າລາວ ຢາກໃຫ້ຂ້າພະເຈົ້າຊຽນຮວບຮວມເຫດການນີ້ໄວ້ *ເພື່ອເຂົາເຈົ້າຈະໄດ້ພູມໃຈທີ່ຄັ້ງໜຶ່ງຂອງຊີວິດຕົນເອງໄດ້ອອກແຮງເສັຍສະລະສ້າງຄຸນງາມຄວາມດີເພື່ອພາລະກິດຂອງຊາດ ແລະ ໄດ້ມີຜົນງານອັນເປັນຕົນເປັນໂຕ. ມອບໃຫ້ຄົນລຸ້ນຕໍ່ໄປໄດ້ຮ່ຳຮຽນເພີ່ມພູນຄູນສ້າງ*ຄວາມພາກພູມໃຈຕໍ່ຄົນລຸ້ນປູ່, ລຸ້ນພໍ່, ລຸ້ນແມ່, ລຸ້ນອ້າຍ, ລຸ້ນເອື້ອຍ, ຂອງຕົນໄດ້ທຳຂຶ້ນແລ້ວມອບໃຫ້ເຂົາໄວ້ຢ່າງອະມະຕະ ຕະຫລອດການະນານ.

*"ນ້ຳໃຈຊາວຜູ້ລຸກຮື້ຢຶດກິດຈະການໄຟຟ້າລາວທົ່ວປະເທດ 14 ຕຸລາ 1974 ໝັ້ນຍືນ ! "*

**ພາບ : 3 ໃນ 8 ຂອງຄະນະນຳການລຸກຮື້ຂຶ້ນຢຶດອຳນາດໄຟຟ້າລາວ 14 ຕຸລາ 74**

**ຈາກຊ້າຍ :** 1. ທ່ານ ບຸນເກີດ ຄຳພາພິງຜ່ານ

*2. ທ່ານ ໜູບັນ ຈັນທະຈັກ*

*3. ທ່ານ ກາໄຊ ອິນທະໄຊ*



## ຄຳເຫັນຂອງທ່ານ ວິລະພົນ ວິຣະວົງ

## ຜູ້ອຳນວຍການໃຫຍ່ ລັດວິສາຫະກິດ ໄຟຟ້າລາວ (1995-ປັດຈຸບັນ)



*ການບັນທຶກເຫດການ ສຳຄັນໃດໜຶ່ງໄວ້, ຢ່າງລະອຽດຄືດັ່ງການລຸກຮື້ຂຶ້ນຍຶດ* ອຳນາດ ບໍລິຫານຂອງກຳມະກອນໄຟຟ້າ *ລາວໃນຄັ້ງ ວັນທີ 14 ຕຸລາ 1974,* ບໍ່ແມ່ນເລື່ອງງ່າຍດາຍປານໃດ ເພາະນອກຈາກສະພາບຕົວຈິງຈະມີຄວາມສັບສົນ ສາລະວົນ ວຸ້ນວາຍແລ້ວ ຜູ້ກ່ຽວຂ້ອງທີ່ມີບົດບາດສຳຄັນ ຈຳນວນຫລວງຫລາຍ ກໍ່ແຈກຢາຍກັນໄປຫລາຍບ່ອນລວມທັງລົ້ມຫາຍຕາຍຈາກໄປແລ້ວກໍ່ມີ. ສະນັ້ນ, ໃນນາມພະນັກງານໄຟຟ້າລາວຜູ້ໜຶ່ງທີ່ບໍ່ໄດ້ຢູ່ໃນເຫດການຕົວຈິງ ແຕ່ກໍ່ໄດ້ສຳຜັດກັບຜົນສະທ້ອນຈາກເຫດການນັ້ນໃນໄລຍະ 3-4 ປີຕໍ່ມາ *ຈຶ່ງຂໍສະແດງຄວາມຊົມເຊີຍ ແລະຂອບອົກ ຂອບໃຈຕໍ່ ທ່ານ ບຸນເກີດ ຄຳພາພົງຜ່ານ ທີ່ໄດ້ເສຍສະລະເຫື່ອແຮງ, ມັນສະໝອງ ແລະເວລາອັນມີຄ່າ ເພື່ອຮວບຮວມຄົ້ນຄວ້າ ຂຽນເປັນບົດບັນທຶກໄວ້ໃຫ້ຄົນໜຸ່ມນ້ອຍລຸ້ນຫລັງໄດ້ອ່ານໄດ້ຮູ້.*

ເນື້ອໃນຈິດໃຈທີ່ເຮັດໃຫ້ມີການລຸກຮື້ຂຶ້ນ *ກໍ່ແມ່ນຢາກໃຫ້ມີຄວາມຍຸຕິທຳ ໃນສັງຄົມ ຄວາມຮັ່ງມີໃຫ້ແກ່ປະຊາຊົນລາວທັງຊາດ* ຊຶ່ງບັນທຶກເຫລັ້ມນີ້ ນອກຈາກຈະໃຫ້ຂໍ້ມູນກ່ຽວກັບເຫດການທີ່ເກີດຂຶ້ນແລ້ວ *ຍັງເປັນບົດຄວາມໃຫ້ບົດຮຽນເຕືອນໃຈແກ່ພວກເຮົາທີ່ສືບຕໍ່ຮັບຜິດຊອບກິດຈະການ ຂອງລັດວິສາຫະກິດ ໄຟຟ້າລາວວ່າ*

ພະນັກງານກຳມະກອນ ໃນສະໄໝລຸກຮື້ຂຶ້ນໄດ້ເສຍສະຫລະ ສູ່ງຊີວິດສ່ຳໃດ ເພື່ອໃຫ້ມີຄວາມຍຸຕິທຳ ໃນການຢູ່ຮ່ວມກັນ ແລະ ຢາກໃຫ້ບໍລິສັດໄຟຟ້າລາວມີກຽດ, ຊື່ສຽງໃນເວທີສາກົນ ເປັນບໍລິສັດ ທີ່ທັນສະໄໝ ນຳໃຊ້ເຕັກໂນໂລຊີໃໝ່ ແລະຂະຫຍາຍຕົວປະກອບ ສ່ວນສ້າງສາປະເທດຊາດລາວ ໃຫ້ຮັ່ງມີເຂັ້ມແຂງ.

ພວກເຮົາ ຄວນຖືເອົາເປັນບົດຮຽນເປັນເຫດການເຕືອນໃຈ ໃນການນຳພາບໍລິຫານ ລັດວິສາຫະກິດ ໄຟຟ້າລາວ ແລະພວກເຮົາ ທຸກຄົນຄວນພາກພູມໃຈ ທີ່ບໍລິສັດປະຕິບັດຫລ້ອນໜ້າທີ່ ທີ່ລັດຖະບານ ມອບໝາຍໃຫ້ ໂດຍສະເພາະຕົວເລກຄາດໝາຍທີ່ຈະໃຫ້ປະຊາຊົນ ລາວມີໄຟຟ້າໃຊ້ຖາວອນກວມ 90% ໃນປີ 2020.

ຂໍໃຫ້ພະນັກງານກຳມະກອນໄຟຟ້າລາວ ທຸກຖ້ວນໜ້າ ຈົ່ງຮັກສາມູນເຊື້ອພິລະອາດຫານ ແລະ ເສີມຂະຫຍາຍທິວຄິດ ປະດິດສ້າງ ເຮັດໃຫ້ໄຟຟ້າລາວພວກເຮົາ ກາຍເປັນກຳລັງແຮງຂອງ ເສດຖະກິດຊາດຢ່າງແທ້ຈິງ.



ພາບ : ບັນດາຜູ້ເຂົ້າຮ່ວມພັດທະນາ ຟຟລ ລຸນຫລັງ 14/10/74

# ໂຮງໄຟຟ້າໃນອະດີດ

ໂດຍ : ບຸນເກີດ ຄຳພາພິງຜ່ານ

ສຽງຈັກ ດັງແຜດກ້ອງ　ປ່າຫຼວງ ສັ່ນສະເທືອນຟິດ
ສີສະເກດ ດັງລະງຶມແຊວ　ສະນັ່ນເມືອງບາດແລງເຢືອນ
ຍາມກາງເວັນຂະຫຍັນຫ້າວ　ຕ້ອງຢຸດແປງລະແວງກວດ
ຕຽມທ່າຕັ້ງໜ້າຈົ້　ສະຕັດຕິ້ງໄດ້ທຸກຍາມ ນັ້ນແລ້ວ
ທຸກນາທີ ຕ້ອງນັ່ງເຝົ້າ　ຕາ ຈ້ອງຈອດຈັບກະດານ
ມື້ໜຶ່ງ ເອົາຮາວແທງ　ຖັ່ງ ຟືນເຂົ້າເຕົາຕົ້ມ
ມື້ໜຶ່ງ ປັບຄັນອ້າວ　ໂວນໄຟໄດ້ຄວາມຖີ່
ເຊົ້າ ຄ່ຳ ຄືນ ຮຸ່ງແຈ້ງ　ປະຈຳເຝົ້າບໍ່ຫ່າງຕາ ດອກນາ
ຕິນໂຕ ມຸມ ກ່ຳ ແຫລ້　ໂອບດ້ວຍຖ່ານ ນ້ຳມັນເຕົາ
ເຊົ້າ ຄ່ຳ ຂົນຟືນກອງ　ອັ່ງເຕັມສະໜາມຈົ້
ລໍ ທີກໂມງ ແລ້ວເຜົາກຸ້ມ　ສຸມຟືນເຂົ້າເຕົາໃຫຍ່
ເລັ່ງຄວາມຮ້ອນໃສ່ໝໍ້ຕົ້ມ　ໃຫ້ອາຍເທົ້າເຂົ້າປັ່ນໄຟ
ສັບ ສອດ ຄາດ ຮ່ວມເຂົ້າ　ຈັກໃຫຍ່ ເຊແອມ
ຈັກ ດຸຍວັງ ທັງ ເຕົາອາຍ　ຮ່ວມພະລັງຂະໜານຄ້ຳ
ເປີດຮາວໄຟໄຂສາຍຈຸ້ມ　ບ່ອນລົງດິນໃຫ້ຕຽມທ່າ
ສັບ ສິ່ງ ໄຟເຂົ້າສູ່ຄຸ້ມ　ຜູ້ຊົມໃຊ້ສະຫວ່າງຕາ ດອກນາ

# ເຊີນອ່ານ !

ບົດປະກອບຄຳເຫັນຜູ້ຢູ່ໃນເຫດການຕົວຈິງ ຂອງການລຸກຮື້ ຂຶ້ນຍຶດກິດຈະການໄຟຟ້າລາວ <14 ຕຸລາ 1974>ແລະ ເປັນຜູ້ໜຶ່ງ ທີ່ໄດ້ ຕິດຕາມຊ່ວຍເຫລືອ ສະໜັບສະໜູນ ແຕ່ຕົ້ນຕະຫລອດປາຍ ຂອງ ຝ່າຍປະຕິວັດຄື : **ທ່ານ ເວດ ໄຊຄຳພິທູນ** ອະດີດຫົວໜ້າ ຫ້ອງວ່າການ ກະຊວງໂຍທາທິການ ຂອງລັດຖະບານປະສົມແຫ່ງ ຊາດ. ( ປີ 1973 - 1975 ).



## ຄຳຄິດຄຳເຫັນສ່ວນຕົວ

<ປື້ມຄືນຂ້ອນແຈ້ງ> ພວກເຮົາພະນັກງານ ມາປະ ກອບເຂົ້າກະຊວງໂຍທາທິການ ແລະ ຂົນສິ່ງຈາກຝ່າຍກຳລັງ ຮັກຊາດມີ 1. ທ່ານ ລຸງສິງກະໂປ ສີໂຄດຈຸນລະມະນີ ( ລັດຖະມົນຕີ ).

2. ທ່ານ ເວດ ໄຊຄຳພິທູນ ຫົວໜ້າຫ້ອງການກະຊວງ.
3. ທ່ານ ທອງສຸກ ສາຍສັງຄີ ຊ່ວຍຫົວໜ້າຫ້ອງການກະຊວງ
4. ທ່ານ ຄຳເພັງ ວັງທານ ເລຂາປະຈຳລັດຖະມົນຕີ.

ໃນຕົ້ນເດືອນ 4-/1974 ໄດ້ເຂົ້າປະຈຳການເຮັດວຽກຢູ່ກະ ຊວງໂຍທາທິການ ໃນເວລານັ້ນການຕໍ່ສູ້ລະວ່າງຝ່າຍປະຕິວັດກັບ ພວກຂາຍຊາດ ແມ່ນ < *ເປັນໄປຢ່າງດຸເດືອດ - ຊັງວຊາດ ເອົາເປັນ ເອົາຕາຍ ບໍ່ມີການປານີປານອມ ເຮົາຢູ່ເຂົາຕາຍ - ເຮົາຕາຍເຂົາຢູ່.* >ສະພາບການທີ່ບັນທຶກໄວ້ໃນ ປື້ມຄືນຂ້ອນແຈ້ງ ໂດຍສະເພາະຕັ້ງ ແຕ່ວັນທີ 14/10/74 ພວກເຮົາຢູ່ໃນສະພາບການ ແລະ ຕິດຕາມ

ເອົາໃຈໃສ່ຢ່າງໃກ້ຊິດຊ່ວຍເຫລືອເທົ່າທີ່ຈະຊ່ວຍເຫລືອໄດ້. ກໍລະນີ ລຸກຮື້ຂຶ້ນຢຶດ ກິດຈະການໄຟຟ້າ *ແມ່ນເອົາຊີວິດເປັນເດີມພັນຂອງນັກລົບໄຟຟ້າ 43 ສະຫາຍທີ່ໄດ້ສ້າງວິລະກຳປະຫວັດສາດນີ້ໄວ້. ເຮົາຮັກແພງນັບຖື - ຊົມເຊີຍສັນລະເສີນ ສະຫາຍ ບຸນເກີດ ຄຳພາພົງຜ່ານ ແລະ 7 ສະຫາຍທີ່ເປັນຫົວລົດໄຟ ນຳຂະບວນຕໍ່ສູ້ຢຶດອຳນາດໄຟຟ້າລາວ ນະຄອນຫລວງວຽງຈັນ ເຂື່ອນນ້ຳງື່ມ ເຊິ່ງເປັນ ຈຸດເປັນຈຸດຕາຍ ຂອງລະບອບເກົ່າ* ໂດຍບໍ່ໄດ້ຄຳນຶງເຖິງຊີວິດອິນຊີ. ຂໍແຕ່ເພື່ອປະເທດ ຊາດບ້ານເມືອງ ເພື່ອຄວາມເປັນທຳ. ໃນຂະບວນລຸກຮື້ຂຶ້ນນີ້ < *ຜູ້ເດັ່ນ ກວ່າໝູ່ແມ່ນສະຫາຍ ບຸນເກີດ ຄຳພາພົງຜ່ານ* > ເຖິງແມ່ນເຮັດວຽກ ເປັນຫມູ່ຄະນະ 8. ***ແຕ່ຫົວກະທິ ເຊິ່ງພວກປະຕິການຫມາຍຫົວ No1 ແມ່ນສະຫາຍ ບຸນເກີດ ຄຳພາພົງຜ່ານທີ່ກ້າແກ່ນເດັດດ່ຽວ. ຖ້າສະຫາຍຖືກເປັນຫຍັງໄປ ຂະບວນລຸກຮື້ຂຶ້ນມີບັນຫາໂລດ. ບໍ່ມີໃຜປະຕິເສດ - ລືມ - ຫລົງໄດ້.*** ເຖິງວັນນີ້ວັນເວລາໄດ້ຜ່ານເລີຍມາຮອດຄົບຮອບ 30 ປີ ( 14/10/74 ) ຂໍໃຫ້ ຄວາມເປັນປຶກແຜ່ນແໜ້ນໜາ ເປັນກ້ອນກຳລັງດຽວ ສາມັກຄີ ປອງດອງຈົ່ງສືບຕໍ່ມີຄືກັບມູນເຊື້ອຂະບວນ 14/10/74. ສົມເປັນ ລູກຮັກຫລານປະເສີດຂອງປະເທດຊາດລາວເຮົາ ຈົ່ງເຕົ້າໂຮມຄວາມສາມັກຄີ 1000 ປາຍສະຫາຍນັກຕໍ່ສູ້ເພື່ອໄຟຟ້າລາວ ຈົ່ງສືບຕໍ່ເປົ່ງປະກາຍເປັນທວນໄຟທົ່ວປະເທດ ເຊັ່ນດັ່ງໃນອະດີດທີ່ໄດ້ ສາມັກຄີລຸກຂຶ້ນຢຶດທຸກອຳນາດມາມີປະຊາຊົນຜ່ານມາ.

<u>100 ຄົນ - 1000 ຄົນ - ລ້ານຄົນເປັນໜຶ່ງດຽວ.</u>

ປະທານ ສຸພານຸວົງ ເວລາເພິ່ນໄປຢ້ຽມຢາມຢູ່ສະຫະພາບ

ໂຊວຽດໄດ້ສັ່ງສອນລູກຫລານລາວວ່າ : ພວກຫລານເອີຍ ! ສາມັກຄີຮັກແພງຊ່ວຍເຫລືອກັນ, ໃຫ້ຮຽນຈົບຫມົດທຸກຄົນແລ້ວກັບຄືນເຂດປົດປ່ອຍ... ບໍ່ມີໃຜຈະຮັກລາວຄືລາວ ຮັກລາວ ຜູ້ອື່ນຮັກເຮົາ 1000 ເທົ່າ ບໍ່ເທົ່າກັບລາວເຮົາຊັງກັນເທື່ອໜຶ່ງ ຂ້າພະເຈົ້າດີໃຈ ໄດ້ລົມນຳລຸງສິງກະໂປວ່າ : *ປະເສີດແທ້ ພວກໄຟຟ້າຊຸດນີ້ < ຄວນປະດັບຫລຽນໄຊພິລະອາດຫານໃຫ້ ບຸນເກີດ ຄຳພາພົງຜ່ານ ແລະ 7 ສະຫາຍ* > ຖ້າມີໂອກາດໄປເຂດປົດປ່ອຍ.

30 ປີຜ່ານມາ ສະຫາຍ ບຸນເກີດ ແລະ ບັນດານັກຮົບ ຟຟລ ຍັງສືບຕໍ່ມີຄວາມສາມັກຄີຢ່າງໜັກແໜ້ນ ຄວາມຊົງຈຳຍັງປົກກະຕິ ທັງຍັງສາມາດລວບລວມເກັບກຳເຫດການຕ່າງໆໄວ້ຢ່າງຖືກຕ້ອງແມ່ນຍຳ ທັງຍັງສາມາດຂຽນເປັນປຶ້ມເອກະສານໃຫ້ຜູ້ສືບທອດໄດ້ສຶກສາຮ່ຳຮຽນ ຫມາກຜົນອັນໂດດເດັ່ນ ຂອງບັນດາບູລຸດເຫລັກກ້າແທ້ໆ ຂອງຄົນ ລາວເຮົາ.

ອວຍພອນບັນດາສະຫາຍໃນຄະນະ 8 ແລະ ໃນ 43 ຈົ່ງປະສົບແຕ່ຜົນສຳເລັດໃນທຸກວຽກງານອັນຊອບທຳ ຂອງພວກທ່ານເຖີດ ພ້ອມນີ້ກໍ່ຂໍໃຫ້ 1000 ປາຍ ສະຫາຍທີ່ຮ່ວມຮົບຈົ່ງມີແຕ່ໂຊກໄຊ !.

ວຽງຈັນ 26 / 5 / 2004

ເວດ ໄຊຄຳພິທູນ
ອະດີດຫົວໜ້າຫ້ອງວ່າ
ການກະຊວງໂຍທາທິການລັດຖະບານ
ປະສົມຊົ່ວຄາວແຫ່ງຊາດ ( 1972-1975 )

# ☆ ຕົ້ນຂ້ອນແຈ້ງ ☆

ໂດຍ " ບຸນເກີດ ຄຳພາພົງຜ່ານ "

" ຕອນທີ 01 "

14 ຕຸລາ 1974 ວັນລຸກຂຶ້ນຍຶດອຳນາດເປັນເຈົ້າຕົນເອງ ຂອງຜູ້ອອກແຮງງານໄຟຟ້າລາວ

*- ພາກທີ 1 : ກະແສອ່ອຍແຫ່ງການລຸກຮື້ !*

## *ກ. ຈຸດເລີ່ມຕົ້ນຂອງໄຟຟ້າລາວ :*

ບໍລິສັດລັດວິສາຫະກິດໄຟຟ້າລາວ ໄດ້ຖືກສ້າງຕັ້ງຂຶ້ນໃນຊຸມປີ (1950-1960 ) ໂດຍການລິເລີ່ມຈາກໜໍ່ແໜງຮາກຖານຂອງໂຮງງານໄຟຟ້າ ທີ່ແລ່ນດ້ວຍຖ່ານໄມ້ ແລະນ້ຳມັນມາຊຸດ, ຈັກດີເອີແຊນ. ຊຶ່ງກ່ອນໜ້ານີ້ແມ່ນຊາວຝຣັ່ງເສດເປັນຜູ້ບໍລິຫານຈັດການໂດຍມີຈຸດປະສົງ ເພື່ອຜະລິດໄຟຟ້າສະໜອງໃຫ້ແກ່ເຮືອນພັກ, ສຳນັກງານ, ອົງການ ແລະ ທີ່ຕັ້ງທາງຍຸດທະສາດການທະຫານທີ່ສຳຄັນຂອງຝຣັ່ງເສດ ທີ່ເຂົ້າມາລ່າອານານິຄົມ ແລະລ່າເມືອງຂຶ້ນແບບເກົ່າໃນ 3 ປະເທດອິນດູຈີນ.

ຈຸດທີ່ຕັ້ງຂອງໂຮງງານໄຟຟ້າ ກໍ່ມີຢູ່ພຽງແຕ່ໃນເມືອງໃຫຍ່**ສຳຄັນຂອງປະເທດ ທີ່ຕັ້ງລຽບຕາມລຳແມ່ນ້ຳຂອງເຊັ່ນ: ວຽງຈັນ,**

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ